# ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກສາລີ

(ສະບັບທົດລອງໃຊ້)

ຂຽນໂດຍ: ທ້າວ ນ້ອຍ
ຂໍ້ມູນຈາກ: ບ້ານທ້ອມ ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ

ປີ 2007

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

# ປື້ມຄວາມຮູ້ພູມປັນຍາທ້ອງຖິ່ນ

# ການປູກສາລີ

ຮິບໂຮມ ແລະ ຈັດໜ້າໂດຍ ນາງ ຈັນທະຈອນ ຊຸມພິນພັກດີ

ແຕ້ມໂດຍ: ......

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳມະນີ ວົງພິມມະຈັນ

ອ.ຈ ພິນມະນີ ສີລິພົງ

ອ.ຈ ທອງຂັນ ສີລິໂພຄຳ

ເຈົ້າຂອງ: ພະແນກສຶກສາ ນະຄອນຫຼວງວຽງຈັນ ແລະ

ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

## ຄຳນຳ

ປຶ້ມພູມປັນຍາທ້ອງຖິ່ນເຫຼັ້ມນີ້ ໄດ້ມາຈາກການຂຽນ ຂອງອາສາສະໝັກ ຊຶ່ງໄດ້ຮັບການຮຽບຮຽງເບື້ອງຕົ້ນຈາກຄະນະອຳນວນການສູນອົບຮົມຮ່ວມພັດທະນາ.

ປຶ້ມເຫຼັ້ມນ້ອຍໆນີ້ໄດ້ບັນຈຸເອົາເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງ ເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນ ປ. 1 ປໍ 2 ແລະ ບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຄິດວ່າ ປຶ້ມເຫຼັ້ມນີ້ຄົງ ເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກ ທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນພຽງພໍ ແລະຂາດໄປຫວັງວ່າຄົງໄດ້ຮັບອະໄພຈາກທຸກໆທ່ານພວກເຮົາພ້ອມທີ່ຈະປັບປຸ່ງນຕາມຄວາມເໝາະສົມ.

ຄະນະຈັດທຳ

## ຮູບ ແລະ ປະຫວັດຂອງຜູ້ຂຽນ



ຊື່ ແລະ ນາມສະກຸນ ທ້າວ ນ້ອຍ
ອາຍຸ 40 ປີ
ອາຊີບ ນາຍບ້ານ

## ເປັນຫຍັງຈຶ່ງຢາກຂຽນຫົວຂໍ້ນີ້

ມັນຈຳເປັນຫລາຍທີ່ເຮົາຈະຂຽນຫົວຂໍ້ນີ້ຂຶ້ນມາ ເພາະວ່າມັນເປັນຫົວຂໍ້ໜຶ່ງທີ່ເຮົາສາມາດເຮັດການຜະລິດ ແລະສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ

PDF created with pdfFactory Pro trial version www.pdffactory.com

- ຫລືວ່າຈະໃຫ້ຄູຝຶກເປັນຜູ້ນຳພາເລີຍກໍ່ໄດ້, ແລ້ວໃຫ້ຜູ້ທີ່ເຮັດຜິດກະຕິກາ ອອກມາຫລັງຈາກຫລິ້ນແລ້ວ ແມ່ນລົງໂທດໃຫ້ລາວເຮັດຫຍັງກໍໄດ້ ແລ້ວແຕ່ຄວາມເໝາະສົມ.
- ***ຕົວຢ່າງ:***

- ໃຫ້ຮ້ອງເພງຕາມໃຈ ຫລືວ່າຟ້ອນໃຫ້ໝູ່ເບິ່ງກໍໄດ້ ແລ້ວໃຫ້ໝູ່ເປັນຄົນຕົບມືໃຫ້ ຫລືວ່າຮ້ອງເພງໃຫ້ ລາວຟ້ອນກໍໄດ້

## ບົດເລກ

- ຄອບຄົວແມ່ປ້າທອງດີໄດ້ປູກສາລີ ເປັນຈຳນວນຫລາຍ ມີມື້ໜຶ່ງເພິ່ນໄດ້ຕົ້ມສາລີ ໄປຂາຍຈຳນວນ10 ມັດ.
  ມັດໜຶ່ງລາຄາ 5.000 ກີບ
  ຖາມວ່າລາວຂາຍສາລີໄດ້ເງິນເທົ່າໃດ?
- ສາລີທັງໝົດ 10 ມັດ
- ມັດໜຶ່ງລາຄາ 5.000 ກີບ
- 10 x 5.000 = 50.000 **ກີບ**

ຕອບ: **ຄອບຄົວແມ່ປ້າທອງດີຂາຍສາລີທັງໝົດໄດ້ເງິນເທົ່ານີ້** 50.000 **ກີບ**

## ຄວາມເປັນມາ:

ປະເທດລາວເຮົາເປັນປະເທດທີ່ຕັ້ງຢູ່ແຄມແມ່ນ້ຳຂອງ. ດັ່ງນັ້ນປະເທດລາວເຮົາຈຶ່ງເປັນປະເທດທີ່ມີດິນທີ່ອຸດົມສົມບູນເໝາະແກ່ການປູກຝັງຂອງຊາວກະສິກອນຫລາຍຢ່າງເຊັ່ນ: ການປູກພືດຜັກ ແລະການປູກສາລີເປັນຕົ້ນ ໝາກສາລີເປັນອາຫານຂອງຄົນ ແລະສັດເປັນວັດຖຸດິບ ສຳລັບປ້ອນໂຮງງານຜະລິດ ທີ່ວອາຫານສັດ ທັງຊ່ວຍສ້າງລາຍໄດ້ໃຫ້ແກ່ຄອບຄົວຊາວສວນ, ການປູກສາລີມີມາແຕ່ບູຮານຈົນເຖິງປະຈຸບັນ ແລະ ເປັນອາຊີບເສີມຊະນິດໜຶ່ງຂອງຊາວກະສິກອນໃນປະເທດເຮົາ.

ການປູກສາລີແມ່ນເພິ່ນປູກໄດ້ທຸກລະດູການແລະມີຫຼາຍຊະນິດຫຼາຍປະເພດແຕກຕ່າງກັນອອກໄປເຊັ່ນ: ສາລີຂາວ, ສາລີເຫຼືອງ, ສາລີກ່ຳ, ສາລີມັນແຂງ, ທີ່ໃຊ້ເປັນອາຫານສັດ.

## ອຸປະກອນ:

1. ສຽມເອົາໄວ້ເພື່ອຂຸດຂຸມ

PDF created with pdfFactory Pro trial version www.pdffactory.com

2. ເຊືອກເບັ່ງຫຼືຜຽກເອົາໄວ້ເພື່ອເບັ່ງໃຫ້ເປັນແຖວຊື່ ແລະ ສະເໝີກັນ

3. ກຽມແນວພັນ

4. ຈົກເອົາໄວ້ສັບຫຍ້າ

- ***<u>ອຸປະກອນ:</u>***
  - ເຈ້ຍ A0
  - ເຝີດ
  - ມີດຕັດ
  - ສະກ໋ອດ
- ***<u>ວິທີຫລິ້ນ:</u>***
  - ໃຫ້ທີມງານລວມກັນເປັນກຸ່ມໃຫ່ຍ
  - ຫລັງຈາກນັ້ນ, ໃຫ້ທີມງານຢືນອອ້ມເປັນວົງມົນ
  - ຕໍ່ມາ, ໃຫ້ຜູ້ນຳພາເຂົ້າໄປກາງວົງມົນ, ແລ້ວອະທິບາຍວິທີການຫລິ້ນ ໃຫ້ທີມງານເບິ່ງກ່ອນ
  - ຫລັງຈາກນັ້ນ, ກໍພາກັນຫລິ້ນໄປພ້ອມໆກັນ
  - ເມື່ອໄດ້ຍິນຜູ້ນຳພາເວົ້າວ່າ: “ສາລີ” ແມ່ນໃຫ້ສະມາຊິກຢືນຢູ່ບ່ອນເກົ່າ
  - ເມື່ອໄດ້ຍິນຜູ້ນຳພາເວົ້າວ່າ: “ສາລອຍ” ໃຫ້ສະມາຊິກພາກັນຍ່າງອ້ອມເປັນວົງມົນ
  - ເມື່ອໄດ້ຍິນຜູ້ນຳພາເວົ້າວ່າ: “ໝາກນອຍ”ໃຫ້ສະມາຊິກພາກັນແລ່ນອ້ອມເປັນວົງມົນ
  - ຫລັງຈາກນັ້ນ, ເມື່ອໄດ້ຍິນຄຳວ່າ ”ສາລີ” ໃຫ້ຢຸດຢູ່ບ່ອນເກົ່າ. ຖ້າຫາກວ່າມີຄົນໃດແລ່ນຕຳກັນ ເຮັດ ຜິດຮອດ 2-3 ເທື່ອ, ໃຫ້ຄົນນັ້ນອອກມານຳພາໝູ່ຫລິ້ນຕໍ່ ຈົນກ່ວາຈະມີຄົນຜິດອອກມານຳພາຫຼິ້ນແທນ

PDF created with pdfFactory Pro trial version www.pdffactory.com

## ລຳ : ການປູກສາລີ

ຟັງເດີໆພວກພີ່ນ້ອງ ຊາວໄຮ່ຊາວນາ
ຫລານຊິຈາຄຳໄຂ ເລື່ອງກະສິກຳນີ້
ມັນຊິມີຫລາຍແບບ ຫລາຍອັນພັນຢ່າງ
ຟັງເດີພວກພີ່ນ້ອງ ຟັງແລ້ວໃຫ້ຈື່ເອົາລະນາ...
ຟັງເດີ ຫລານຊິເວົ້າຕາມຂັ້ນ ການປູກສາລີ
ພູມປັນຍາຂອງເຮົາ ແຕ່ດົນນານແລ້ວ
ປູກເປັນແຖວເປັນຖັ້ນ ຢາຍກັນຢູ່ທົ່ວທຸກບ່ອນ
ຂ້ອຍອອນຊອນແທ້ເດ້ ຈຶ່ງມາເວົ້າສູ່ຟັງ ເຈົ້າເອີຍ...

## ***ຊື່ເກມ: ສາລີ, ສາລອຍ, ໝາກນອຍ.***

- ***ຈຸດປະສົງ:***
- ເພື່ອໃຫ້ຜູ້ເຂົ້າຮ່ວມມີຄວາມສາມັກຄີກັນ ແລະລຶ້ງເຄີຍກັນ
- ***ຈຳນວນຄົນ:***
- 20 – 30 ຄົນ
- ***ເວລາ:***
- 15-20 ນາທີ
- ***ສະຖານທີ່:***
- ຕ້ອງເປັນເດີ່ນທີ່ກ້ວາງ
- ປອດໂປ່ງດີ

5. ຄາດແລະໄຖ

6. ຂີ້ເທົ່າເອົາໄວ້ໃສ່ໃນດິນເພື່ອບໍ່ໃຫ້ມົດແມງໃນດິນກັດຕົ້ນສາລີ

7. ກະລ່ອງຫຼືຖົງໃສ່ແກ່ນສາລີ

PDF created with pdfFactory Pro trial version www.pdffactory.com

+ <u>ລະດູການປູກ:</u>

- ເລີ່ມປູກແຕ່ເດືອນ 12 -3

+ **<u>ວິທີຄັດເລືອກແນວພັນ</u>**

- ຕ້ອງເລືອເອົາຝັກທີ່ໃຫຍ່ເຕັມດີມີເມັດຕື່ງ

**<u>ວິທີການປູກສາລີ:</u>**

- ສະຖານທີ່ປູກຕ້ອງແມ່ນໄຮນາ ສວນ ເຊິ່ງເປັນດິນທີ່ເໝາະ ສົມ

**ເພງ : ການປູກສາລີ.**

| | |
|---|---|
| ບ້ານຂອງຂ້ອຍ | ປູກໝາກສາລີ |
| ຊຽວງາມດີ | ຕາມສວນຕາມນາ |
| ບ້ານຂອງຂ້ອຍ | ມີການພັດທະນາ |
| ມີການສ້າງສາ | ທາງດ້ານກະສິກຳ (ຊ້ຳ). |

**ເຊີ້ງ : ການປູກສາລີ**

ໂຮ້....................................................ຮີ້ວ

| | |
|---|---|
| ມາພວກເຮົາມາ | ມາພວກເຮົາມາ |
| ພໍ່ແມ່ອາວອາ | ທັນມາພີ້ກ່ອນ |
| ຢ່າຟ້າວຫລັບນອນ | ຟັງຫລານຊິກ່າວ |
| ມັນເປັນເລື່ອງລາວ | ການປູກສາລີ |
| ເຮັດໃຫ້ງາມດີ | ກະສິກຳແບບເກົ່າ |
| ພວກຫລານຊິເລົ່າ | ການປູກການຫາ |
| ບາດໃຫຍ່ຂຶ້ນມາ | ຕັດຂາຍທຸກເມື່ອ |
| ນີ້ເວົ້າໃຫ້ເຊື່ອ | ໝາກຜົນຂອງມັນ |
| ໝາກສາລີສຳຄັນ | ເຮັດຫຍັງກໍໄດ້ |
| ເພິ່ນເອົາໄປໃຊ້ | ເຂົ້າໃນໂຮງງານ |
| ເຮັດທົ່ວອາຫານ | ອອກຂາຍຕະຫລາດ |
| ຈັ່ງແມ່ນສະຫລາດ | ພູມປັນຍາເຮົາ |

PDF created with pdfFactory Pro trial version www.pdffactory.com

## ຄຸນປະໂຫຍດຂອງສາລີ:

-
ໝາກສາລີເປັນອາຫານທີ່ມີທາດແປ້ງເຊິ່ງສັບພະຄຸນເທົ່າຫຼຽມກັບເຂົ້າ ເຮັດໃຫ້ຮ່າງກາຍແຂງແຮງຊາວກະສິກອນນິຍົມກັນບໍລິໂພກ

- ເປັນວັດຖຸດິບສົ່ງເຂົ້າໂຮງງານ ທີ່ວອາຫານສັດແລະໂຮງງານຜະລິດແປ້ງສາລີເຊິ່ງສາມາດນຳມາປະສົມເປັນອາຫານຫຼາຍຊະນິດ
- ຕົ້ນແລະໃບທີ່ເຫລືອຍັງເປັນອາຫານຂອງສັດໂດຍສະເພາະແມ່ນງົວ ແລະ ຄວາຍ.

**ກາບ : ປູກສາລີ**

| | |
|---|---|
| ຢູ່ບ້ານຂ້ອຍ | ເພິ່ນປູກສາລີ |
| ຊຽວງາມດີ | ຢາຍຢູ່ເປັນບ່ອນ |
| ຂ້ອຍອອນຊອນ | ຍາມເພິ່ນໄປຂາຍ |
| ປູກໃຫ້ຫລາຍໆ | ເພື່ອເປັນສິນຄ້າ |
| ພູມປັນຍາ | ຂອງເຮົາແຕ່ກ່ອນ |
| ພວກເພິ່ນສອນ | ສືບຕໍ່ກັນມາ |
| ໃຫ້ເຮົາພາ | ລູກຫຼານສືບຕໍ່ |
| ແມ່ນແທ້ບໍ | ເພິ່ນເວົ້ານີ້ນາ |

- ກ່ອນອື່ນແມ່ນກຽມແນວພັນໄວ້

- ກຽມດິນ ດ້ວຍການໄຖ-ຄາດ ຫຼື ຂຸດເພື່ອຕາກດິນໄວ້

- ເມື່ອກຽມດິນແລ້ວພວກເຮົາກໍເລີ່ມປູກເຊິ່ງໄລຍະຫ່າງລະຫວ່າງຂຸດແມ່ນ 25-30 ຊັງຕີແມັດແລ້ວຈຶ່ງເອົາແນວພັນທີ່ເຮົາກະກຽມໄວ້ລົງໃສ່ໃນຂຸມໆລະ 2-3 ເມັດ ແລ້ວເອົາດິນຖົມໄວ້ເລັກໜ້ອຍ.

PDF created with pdfFactory Pro trial version www.pdffactory.com

- ກ່ອນຈະເອົາແນວພັນໄປປູກພວກເຮົາຄວນແຊ່ນ້ຳໄວ້ ປະມານ 1 ຄືນ

- ໄລຍະຫ່າງຂອງຂຸມປະມານ 30 – 40 ຊັງຕີແມັດ.

- ໄລຍະຫ່າງຂອງລຽນຫລືຫວ່າງປະມານ 60-10 ຊັງຕີແມັດ

+ **<u>ລັກສະນະຂອງຕົ້ນສາລີ:</u>**

- ເປັນພືດສີຂຽວລຳຕົ້ນເປັນປ້ອງໃບສີຂຽວເປັນໃບລວງດຽວ ກົກຂອງໃບເອີ້ນວ່າກາບ

**<u>ການດູແລຮັກສາ:</u>**

- ຫລັງຈາກປູກໄດ້ປະມານ 3-4 ອາທິດ, ພວກເຮົາຄວນທົດ ນ້ຳໃສ່ຝຸ່ນ ເສຍຫຍ້າ ຊຸດຂຸມ ພວນດິນໃຫ້ຜົງ ເພື່ອໃຫ້ຮາກຂອງຕົ້ນສາລີຂະຫຍາຍຕົວໄດ້ດີ.
- ຫລັງຈາກນັ້ນພວກເຮົາກໍທົດນ້ຳໄປເລື້ອຍໆຈົນກວ່າຕົ້ນສາລີ ຂຽວງາມດີ.
- ປະມານ 120-130 ວັນ, ພວກເຮົາກໍສາມາດເກັບຜົນຜະລິດໄດ້.

PDF created with pdfFactory Pro trial version www.pdffactory.com